# ເຈົ້າແຂວງອັດຕະປື ຊຸກຍູ້ໃຫ້ປະຊາຊົນຫັນມາປູກອ້ອຍໃຫ້ຫຼາຍຂຶ້ນ ເພື່ອການລົງທຶນທີ່ໝັ້ນຄົງ

9 ກໍລະກົດ 19 (16:41)



ພາຍຫລັງທີ່ ບໍລິສັດນ້ຳຕານອ້ອຍ **TTC** ແຂວງອັດຕະປື ໄດ້ລົງເຜີຍແຜ່ຄວາມເຂົ້າໃຈ ກ່ຽວກັບນະໂຍບາຍ ແລະ ວິທີການປູກອ້ອຍ ໃຫ້ປະຊາຊົນຜູ້ປະສົບໄພຢູ່ ເມືອງສະໜາມໄຊ ກ່ຽວກັບການນະໂຍບາຍຕ່າງໆຂອງບໍລິສັດ ນ້ຳຕານອ້ອຍ **TTC** ຕາມແຜນໂຄງການ **2+3** ໃນການຮ່ວມມື ຜະລິດກະສິກຳລະຫວ່າງ ປະຊາຊົນ ແລະ ບໍລິສັດ ໂດຍທີ່ທາງບໍລິສັດເປັນຜູ້ສະໜອງທຶນ, ເຕັກນິກ, ການຕະລາດ ແລະ ຊາວບ້ານ ເປັນຜູ້ສະໜອງດິນ ແລະ ແຮງງານ ເຊັ່ນວ່າ: ບໍລິສັດຈະຊ່ວຍໃນການບຸກເບີກເນື້ອທີ່, ໄຖດິນ, ສະໜອງແນວພັນອ້ອຍ, ມີວິຊາການຊ່ວຍລົງຕິດຕາມແນະນຳ ແລະ ຮັບຊື້ໃນລາຄາທີ່ເໝາະສົມ ປະເມີນໄດ້ວ່າ ປະຊາຊົນ ມີຄວາມສົນໃຈທີ່ຈະຮ່ວມມືໃນການຜະລິດຮ່ວມກັບບໍລິສັດດັ່ງກ່າວຫລາຍຂຶ້ນ.




This website uses cookies
We use cookies to personalise content and ads. For more information, please see our 'Cookies Policy' and 'Privacy Policy'
Accept

ທ່ານ ເລັດ ໄຊຍະພອນ ເຈົ້າແຂວງ ອັດຕະປື ໄດ້ມີຄຳເຫັນໂອ້ລົມ ຄະນະທີ່ປະຊາຊົນ ຜູ້ປະສົບໄພເຂົ້າຮ່ວມຮັບຟັງ ເມື່ອບໍ່ດົນມານີ້ ວ່າ: ການປູກອ້ອຍ ທີ່ມີນະໂຍບາຍທີ່ເໝາະສົມນີ້ ເປັນໂອກາດທີ່ດີ, ທັງເປັນການລົງທຶນທີ່ຮັບປະກັນດ້ານຄວາມໝັ້ນຄົງ ຮັບປະກັນດ້ານຜົນຜະລິດ ແລະ ລາຄາການຊື້-ຂາຍຕາມ ໂຄງການ **2+3** ຂາຍໃຫ້ ບໍລິສັດນ້ຳຕານອ້ອຍນັ້ນ ແນ່ນອນວ່າແຕ່ລະຄອບຄົວຈະມີລາຍຮັບເພີ່ມ. ສິ່ງສຳຄັນໃນທີ່ນີ້ ແມ່ນແນ່ໃສ່ສົ່ງເສີມ ປະຊາຊົນມີອາຊີບເຮັດ, ມີລາຍຮັບ ເພື່ອພັດທະນາຄອບຄົວຕົນເອງ ໃຫ້ມີຊີວິດການເປັນຢູ່ທີ່ດີຂຶ້ນ ດັ່ງນັ້ນ ຮຽກຮ້ອງໃຫ້ພໍ່ແມ່ປະຊາຊົນ ມີຄວາມເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ-ລັດ, ພະຍາມຫຼີກລ່ຽງການທຳມາຫາກິນແບບອາໄສທຳມະຊາດ ແລ້ວຫັນແນວຄິດສົ່ງເສີມ ແລະ ພັດທະນາການປູກ-ການລ້ຽງ ຫັນແນວຄິດໃຫ້ມີ ຄວາມດຸໝັ່ນອອກແຮງງານ ປູກຝັງ-ລ້ຽງສັດ ເຫຼົ່ານີ້ເປັນຕົ້ນ ຈະຊ່ວຍ ກະຈາຍລາຍຮັບ ໃຫ້ປະຊາຊົນ ໄດ້ດີເທື່ອລະກ້າວ.

**ຂໍຂອບໃຈ**
ຂໍ້ມູນ : ນັກຂ່າວອັດຕະປື




ຕິດຕາມ Sanook Muan

# ເລື່ອງທີ່ກ່ຽວຂ້ອງ


ນັກສຶກສາລາວ ມາຈາກຕ່າງປະເທດ 80 ກວ່າຄົນ ເຂົ້າສູນກັກກັນ ຢູ່ອັດຕະປື ເພື່ອເຝົ້າລະວັງໂຄວິດ-19
7 ເມສາ 20


ອັດຕະປື ເຂັ້ມງວດ ພົບເຫັນການຂຶ້ນລາຄາ ໄລຍະ ໂຄວິດ-19 ລະບາດ ແຈ້ງສາຍດ່ວນ 1510
1 ເມສາ 20


ອັດຕະປື ເຄັ່ງຄັດ ເຝົ້າລະວັງ ແລະ ປ້ອງກັນພະຍາດໂຄວິດ-19
19 ມີນາ 20


"ນ້ຳຕົກຕາດແຊພະ" ແຂວງອັດຕະປື ສະຖານທີ່ທຳມະຊາດທີ່ກຳລັງເລັ່ງປັບປຸງ
29 ກຸມພາ 20

# ເລື່ອງຫຼ້າສຸດຂອງໝວດ ຂ່າວປະຈຳວັນ


30 ມິຖຸນາ 22
ຄວາມພາກພູມໃຈຂອງທຸລະກິດລາວ: ຂັບເຄື່ອນຄວາມຫຼາກຫຼາຍ & ການມີສ່ວນຮ່ວມຂອງກຸ່ມຄົນທີ່ມີຄວາມຫຼາກຫຼາຍທາງເພດ


6 ພຶດສະພາ 22
ອ່ານດວງລາຍວັນປະຈຳວັນສຸກ ທີ 6 ພຶດສະພາ 2022 ຕາມແຕ່ລະວັນເກີດ


3 ພຶດສະພາ 22
ອ່ານດວງລາຍວັນປະຈຳວັນອັງຄານ ທີ 3 ພຶດສະພາ 2022 ຕາມ


14 ມີນາ 22
ອ່ານດວງລາຍວັນປະຈຳວັນຈັນ ທີ 14 ມີນາ

This website uses cookies
We use cookies to personalise content and ads. For more information, please see our 'Cookies Policy' and 'Privacy Policy'
Accept